# ປ່າໄມ້ຢູ່ພາກໃຕ້ ສປປ ລາວ ມີຄວາມສຳຄັນໃນລະດັບສາກົນ

## *ໂຄງການເປີດໃໝ່ ເພື່ອຄຸ້ມຄອງລະບົບນິເວດຢູ່ແຂວງສະຫວັນນະເຂດແບບຍືນຍົງ*

**ນະຄອນຫຼວງວຽງຈັນ, 20 ພຶດສະພາ 2016**: ລັດຖະບານແຫ່ງ ສປປ ລາວ ໄດ້ລົງນາມເປີດໂຄງການໃໝ່ຂອງ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກ ກອງທຶນສິ່ງແວດລ້ອມໂລກ ເຊິ່ງມີເປົ້າໝາຍເພື່ອອະນຸລັກ ແລະ ຄຸ້ມຄອງປ່າໄມ້ ຢູ່ 5 ເມືອງ ຂອງແຂວງສະຫວັນນະເຂດເປັນເວລາ 6 ປີນັບຈາກນີ້.

*ຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງໃນລະບົບນິເວດປ່າໂຄກພາກໃຕ້ຂອງ ສປປ ລາວ* ແມ່ນຊື່ຂອງໂຄງການທີ່ໄດ້ຮັບການອະນຸມັດເພື່ອດຳເນີນໂຄງການໃນປີນີ້ ເຊິ່ງໄດ້ຮັບທຶນຈາກກອງທຶນສິ່ງແວດລ້ອມໂລກຈຳນວນ 10,8 ລ້ານໂດລາສະຫະລັດ ແລະ ຈາກອົງການສະຫະປະຊາຊາດ ເພື່ອການພັດທະນາ 1,2 ລ້ານໂດລາສະຫະລັດ. ອົງການສະຫະປະຊາຊາດ ເພື່ອການພັດທະນາ ຈະຈັດຕັ້ງປະຕິບັດໂຄງການດັ່ງກ່າວຮ່ວມກັບ ກົມຄຸ້ມຄອງຊັບພະຍາກອນປ່າໄມ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ປ່າໂຄກເປັນປ່າໄມ້ຊະນິດໜຶ່ງ ທີ່ມີຫຼາຍໃນອາຊີຕາເວັນອອກສຽງໃຕ້ ເຊິ່ງອຸດົມໄປດ້ວຍຂີ້ຊີ (ນ້ຳມັນຢາງ) ແລະ ໄມ້ທີ່ມີຄຸນຄ່າ. ປ່າໂຄກແມ່ນຕົກຢູ່ໃນສະພາບທີ່ຖືກຄຸກຄາມ ເນື່ອງຈາກວ່າຫຼາຍພື້ນທີ່ຖືກປ່ຽນເປັນດິນກະສິກຳເພື່ອປູກພືດເສດຖະກິດ ແລະ ກິດຈະກຳອື່ນໆເຊັ່ນ: ການຕັດໄມ້, ການລ່າສັດ ແລະ ການເກັບເຄື່ອງປ່າຂອງດົງ. ທັງໝົດເຫຼົ່ານີ້ໄດ້ເຮັດໃຫ້ສະພາບແວດລ້ອມເຂດນີ້ຊຸດໂຊມ. ເຖິງຢ່າງໃດກໍຕາມ, ແຂວງສະຫວັນນະເຂດກໍໄດ້ພະຍາຍາມຄຸ້ມຄອງຮັກສາພື້ນທີ່ປ່າໄມ້ຊະນິດນີ້ໄວ້. ການອະນຸລັກຊີວະນາໆພັນໃນປ່າໂຄກໃນເຂດລຸ່ມແມ່ນ້ຳຂອງເປັນບຸລິມະສິດໜຶ່ງໃນລະດັບສາກົນ ເນື່ອງຈາກວ່າປ່າດັ່ງກ່າວເຕັມໄປດ້ວຍສັດປ່າທີ່ຫາຍາກ ແລະ ຕົ້ນໄມ້ນາໆຊະນິດ ເຊິ່ງເປັນຕົວແທນຂອງລະບົບນິເວດປະເພດນີ້. ໃນ ສປປ ລາວ, ປ່າໂຄກຄືທີ່ຢູ່ອາໄສຂອງສັດປ່ານາໆຊະນິດທີ່ມີຄວາມສຳຄັນໃນລະດັບສາກົນ ເຊັ່ນ ກວາງແອວສ ເຊິ່ງເປັນສັດທີ່ຖືກຄຸກຄາມ ແລະ ປະຈຸບັນ ໃນ ສປປ ລາວ ຍັງມີພຽງແຕ່ 30-40 ໂຕເທົ່ານັ້ນ.

ປ່າໄມ້ປະເພດນີ້ຍັງຄວບຄຸມການສະໜອງນ້ຳໃຕ້ດິນ ໃຫ້ການດູດຊຶມນ້ຳຝົນໄວ້ໃນຮາກໄມ້ ແລະ ໃບໄມ້, ຫຼຸດຜ່ອນອາຍພິດເຮືອນແກ້ວ ແລະ ເກັບຮັກສາອາຍກາກໂບນິກ ພ້ອມທັງຮັກສາດິນເນີນພູບໍ່ໃຫ້ເສາະເຈື່ອນໄດ້

ງ່າຍ. ນອກຈາກນີ້, ຍັງມີຄວາມສຳຄັນຕໍ່ກັບຊຸມຊົນທ້ອງຖິ່ນ ເນື່ອງຈາກວ່າເປັນແຫຼ່ງອາຫານທີ່ຫຼາກຫຼາຍ ທີ່ເປັນເຄື່ອງປ່າຂອງດົງ ເຊັ່ນ ໝາກໄມ້, ເຫັດ ແລະ ແມງໄມ້.

ໂດຍເຫັນໄດ້ຄວາມສຳຄັນໃນລະດັບຊາດ ແລະ ລະດັບສາກົນຂອງປ່າໄມ້ປະເພດນີ້, ລັດຖະບານແຫ່ງ ສປປ ລາວ ໄດ້ຈັດໃຫ້ການອະນຸລັກ ແລະ ການຄຸ້ມຄອງປ່າໄມ້ແບບຍືນຍົງເປັນວຽກງານບຸລິມະສິດໜຶ່ງ. ໂຄງການດັ່ງກ່າວຈະພະຍາຍາມສ້າງກົນໄກການຮ່ວມມື ເພື່ອປະສານງານກ່ຽວກັບການຄຸ້ມຄອງພື້ນທີ່ປ່າໄມ້ທີ່ໄດ້ຮັບການປົກປ້ອງ, ເສີມຂະຫຍາຍປ່າໄມ້ໃນຊຸມຊົນ, ປັບປຸງຊີວິດການເປັນຢູ່ ພ້ອມທັງສົ່ງເສີມການພັດທະນາກິດຈະກຳການທ່ອງທ່ຽວທາງລະບົບນິເວດ. ພື້ນທີ່ປ່າໄມ້ທີ່ໄດ້ຮັບການປົກປ້ອງໃນ ສປປ ລາວ ເປັນຊັບສິນທີ່ສ້າງລາຍຮັບແກ່ປະເທດ ເນື່ອງຈາກວ່າເປັນທ່າແຮງການພັດທະນາ ແລະ ອຸດົມໄປດ້ວຍຊັບພະຍາກອນທຳມະຊາດ ທີ່ມີຄຸນຄ່າ ທີ່ສາມາດປະກອບສ່ວນເຂົ້າໃນການໂຕເຕີບຂອງເສດຖະກິດ. ການສ້າງແຮງຈູງໃຈໃນການອະນຸລັກ ແລະ ຄຸ້ມຄອງປ່າໄມ້ແບບຍືນຍົງແມ່ນໝາກຫົວໃຈຂອງໂຄງການ.

ເພື່ອສະໜັບສະໜູນລັດຖະບານໃນຄຸ້ມຄອງຊັບພະຍາກອນທາງທຳມະຊາດຢ່າງມີປະສິດທິພາບ, ປັບປຸງຊີວິດການເປັນ ແລະ ສ້າງໂອກາດໃໝ່ໆໃນການສ້າງລາຍຮັບ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຮ່ວມມືກັບໜ່ວຍງານພັດທະນາອື່ນໆ ເພື່ອຮັບປະກັນການເຮັດວຽກຮ່ວມກັນລະຫວ່າງ ໂຄງການຕ່າງໆທີ່ກຳລັງຈັດຕັ້ງປະຕິບັດຢູ່ແຂວງສະຫວັນນະເຂດ. ໃນນັ້ນປະກອບມີອົງການຕ່າງໆຄື: ທະນາຄານພັດທະນາອາຊີ, ກອງທຶນອະນຸລັກທຳມະຊາດໂລກປະຈຳລາວ ແລະ ໂຄງການເຊື່ອມໂຍງສິ່ງແວດລ້ອມເຂົ້າໃນກິດຈະກຳແກ້ໄຂຄວາມທຸກຍາກ ລະຫວ່າງອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການສະຫະປະຊາຊາດ ເພື່ອສິ່ງແວດລ້ອມ ເຊິ່ງໜ່ວຍງານເຫຼົ່ານີ້ແມ່ນເປັນຜູ້ຮ່ວມສະໜອງທຶນໃນການຈັດຕັ້ງປະຕິບັດໂຄງການຕ່າງໆ. ເຊັ່ນດຽວກັນ, ລັດຖະບານແຫ່ງ ສປປ ລາວ ກໍໄດ້ປະກອບສ່ວນໃນໂຄງການໂດຍຜ່ານຫ້ອງການ ໃນຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ ເຊິ່ງຈະໄດ້ເຮັດວຽກຮ່ວມກັນໂດຍກົງພາຍໃຕ້ກອບຂອງໂຄງການ.

ທ່ານນາງ ຄາຣິນາ ອິມໂມເນັນ, ຜູ້ຕາງໜ້າອົງການສະຫະປະຊາດ ເພື່ອການພັດທະນາ ແລະ ຜູ້ປະສານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ໄດ້ເນັ້ນເຖິງການປະກອບສ່ວນຂອງໂຄງການ ຕໍ່ກັບການບັນລຸເປົ້າໝາຍລະດັບຊາດຂອງ ສປປ ລາວ: “ເປົ້າໝາຍລວມຂອງປະເທດ ຕາມທີ່ໄດ້ລະບຸໃນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແມ່ນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ການພັດທະນາຂອງເຄືອຂ່າຍໃນພື້ນທີ່ໂຄງການນີ້ ສາມາດສະໜັບສະໜູນນີ້ໂດຍຜ່ານການປັບປຸງຊີວິດການເປັນຢູ່, ການສ້າງລາຍຮັບ, ຄວາມຍືນຍົງຂອງສິ່ງແວດລ້ອມ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດ. ພ້ອມກັນນັ້ນ, ໂຄງການຍັງຈະຊ່ວຍໃຫ້ ສປປ ລາວ ບັນລຸເປົ້າໝາຍໃນການເພີ່ມພື້ນທີ່ປ່າໄມ້ໃຫ້ໄດ້ 70% ໃນປີ 2020 ອີກດ້ວຍ”.

ຈົບ.

ໝາຍເຫດເຖິງບັນນາທິການ:

*ໂຄງການຄຸ້ມຄອງດິນ ແລະ ປ່າໄມ້ແບບຍືນຍົງໃນລະບົບນິເວດປ່າໂຄກຢູ່ພາກໃຕ້ຂອງ ສປປ ລາວ* ຈະຖືກຈັດຕັ້ງປະຕິບັດຢູ່ 5 ເມືອງຂອງແຂວງສະຫວັນນະເຂດ (ເມືອງພີນ, ເມືອງຊົນບູລີ, ເມືອງທ່າພັນທອງ, ເມືອງສອງຄອນ ແລະ ເມືອງພະລານໄຊ) ເປັນເວລາ 6 ປີ ແຕ່ປີ 2016 -2022.

ກອງທຶນສິ່ງແວດລ້ອມໂລກ ເປັນອົງການທາງການເງິນທີ່ດຳເນີນງານອິດສະຫຼະ ແລະ ສະໜອງທຶນຊ່ວຍເຫຼືອລ້າໃຫ້ໂຄງການທີ່ກ່ຽວຂ້ອງກັບການຄຸ້ມຄອງຊີວະນາໆພັນ, ການປ່ຽນແປງຂອງສະພາບດິນຟ້າອາກາດ, ນ້ຳ, ການຊຸດໂຊມຂອງດິນ, ຊັ້ນໂອໂຊນ ແລະ ສານພິດທີ່ເກີດຈາກທຳມະຊາດ.

*### ### ###*

*ອົງການສະຫະປະຊາຊາດ ເພື່ອການພັດທະນາ ເຮັດວຽກຮ່ວມກັບທຸກຊັ້ນຄົນໃນສັງຄົມ ໃນການສ້າງສາປະເທດຊາດໃຫ້ສາມາດຕໍ່ສູ້ກັບວິກິດການຕ່າງໆ ແລະ ສົ່ງເສີມການພັດທະນາແບບຍືນຍົງ ເພື່ອຍົກສູງຄຸນະພາບຊີວິດໃຫ້ແກ່ທຸກໆຄົນ. ພວກເຮົາມີຫ້ອງການຢູ່ຫລາຍກວ່າ 170 ປະເທດໃນທົ່ວ ໂລກ, ພວກເຮົາແລກ ປ່ຽນແນວຄວາມຄິດ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ສະພາບທ້ອງຖິ່ນ ເພື່ອຊ່ວຍປັບປຸງຊີວິດການເປັນຢູ່ ແລະ ສ້າງປະເທດໃຫ້ມີຄວາມຈະເລີນສີວິໄລ.*

Lane Xang Avenue, P.O. Box 345, Vientiane Capital, Lao PDR | Tel: 021 267 777 | www.la.undp.org |